ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR

ຂ່າວ NEWS

ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283



# ຝຶກອົບຮົມທາງໄກວຽກງານການຄຸ້ມຄອງທະນາຄານທຸລະກິດ ໃຫ້ແກ່ສາຂາພາກ ທຫລ ປະຈຳປີ 2021




ກອງປະຊຸມຝຶກອົບຮົມທາງໄກກ່ຽວກັບວຽກງານການຄຸ້ມຄອງທະນາຄານທຸລະກິດໃຫ້ແກ່ສາຂາພາກ ທຫລ ປະຈຳປີ 2021 ໄດ້ຈັດຂຶ້ນເປັນເວລາ 3 ວັນ ເລີ່ມແຕ່ວັນທີ 06-08 ທັນວາ 2021.ໃຫ້ກຽດເປັນປະທານກອງປະຊຸມໃນຄັ້ງນີ້ໂດຍ ທ່ານ ປອ ສົມປະດິດ ວໍລະຈິດ ຮອງຫົວໜ້າກົມຄຸ້ມຄອງທະນາຄານທຸລະກິດ, ຊຶ່ງມີຜູ້ເຂົ້າຮ່ວມທີ່ເປັນພະນັກງານຂອງ ທຫລ ສາຂາພາກ ແລະ ກຄທ ຈຳນວນ 60 ກວ່າທ່ານ.

ອີງຕາມແຜນຍຸດທະສາດການພັດທະນາລະບົບສະຖາບັນການເງິນ-ເງິນຕາ ຂອງ ສປປ ລາວ ໄລຍະ 10 ປີ (2016-2025) ແລະ ວິໄສທັດຮອດປີ 2030 ຂອງທະນາຄານແຫ່ງ ສປປ ລາວ (ທຫລ) ໂດຍສະເພາະການພັດທະນາ ແລະ ສ້າງຄວາມໝັ້ນຄົງຂອງລະບົບສະຖາບັນການເງິນ-ເງິນຕາ, ທຫລ ໄດ້ກຳນົດທິດທາງ ໃນການພັດທະນາການຄຸ້ມຄອງທະນາຄານທຸລະກິດ ເພື່ອສ້າງລະບົບທະນາຄານໃຫ້ເຕີບໃຫຍ່ເຂັ້ມແຂງ, ປອດໄພ, ຍືນຍົງ ແລະ ທັນສະໄໝຢ່າງຕໍ່ເນື່ອງ,  ການຝຶກອົບຮົມດ້ານວິຊາສະເພາະໃຫ້ພະນັກງານໃນຄັ້ງນີ້ ກໍ່ເພື່ອເປັນການຮັບປະກັນການຈັດຕັ້ງປະຕິບັດແຜນການດັ່ງກ່າວໃຫ້ບັນລຸຢ່າງມີປະສິດທິຜົນ. ການຝຶກອົບຮົມໃນຄັ້ງນີ້, ໄດ້ເນັ້ນໜັກວຽກງານການຄຸ້ມຄອງທະນາຄານທຸລະກິດ ໂດຍສະເພາະທີ່ຕິດພັນກັບມາດຕະຖານບາເຊວ ແລະ ການຄຸ້ມຄອງຕາມຄວາມສ່ຽງ ເພື່ອສ້າງຂີດຄວາມສາມາດໃຫ້ພະນັກງານຄຸ້ມຄອງຂອງ ທຫລ ກໍ່ຄືພະນັກງານຈາກສາຂາພາກ ໃຫ້ສາມາດກຳໄດ້ເນື້ອໃນ ແລະ ມີຄວາມເຂົ້າໃຈເປັນເອກະພາບກັນທັງດ້ານຫຼັກການ ແລະ ການຈັດຕັ້ງປະຕິບັດວຽກງານຕົວຈິງ. ພ້ອມກັນນັ້ນ, ກໍ່ຍັງເປັນການຖອດຖອນບົດຮຽນເພື່ອແລກປ່ຽນຄວາມຮູ້ ແລະ ຂໍ້ສະເໜີ ລະຫວ່າງສາຂາດ້ວຍກັນ ຕໍ່ວຽກງານການ

ຄຸ້ມຄອງທະນາຄານທຸລະກິດ, ຊຶ່ງເນື້ອໃນທີ່ໄດ້ນໍາສະເໜີນັ້ນ ຖືວ່າເປັນວຽກງານທີ່ໃໝ່, ມີບາງຫົວຂໍ້ລົງເລິກໃນວຽກງານວິຊາສະເພາະ ແລະ ທ້າທາຍພໍສົມຄວນຕໍ່ພະນັກງານທີ່ຮັບຜິດຊອບວຽກງານທີ່ກ່ຽວຂ້ອງ.

ການຝຶກອົບຮົມໃນຄັ້ງນີ້ ຈະເປັນແນວທາງໃນການຄົ້ນຄວ້າ ແລະ ບ່ອນອີງທີ່ສໍາຄັນໃຫ້ແກ່ພະນັກງານ ທຫລ ທັງໃນສູນກາງ ແລະ ທ້ອງຖິ່ນ ໃນການຜັນຂະຫຍາຍເຂົ້າໃນວຽກງານຂອງຕົນ ເພື່ອຮັບປະກັນການຈັດຕັ້ງປະຕິບັດໃຫ້ມີຄວາມສອດຄ່ອງ, ມີປະສິດທິພາບ ແລະ ສາມາດບັນລຸຕາມລະດັບຄາດໝາຍທີ່ໄດ້ກໍານົດໄວ້ ແນໃສ່ເພື່ອພັດທະນາລະບົບການຄຸ້ມຄອງທະນາຄານທຸລະກິດ ໃຫ້ມີຄວາມໝັ້ນຄົງ ເຂັ້ມແຂງຢ່າງຕໍ່ເນື່ອງ, ສາມາດເຊື່ອມໂຍງກັບພາກພື້ນ ແລະ ຍັບເຂົ້າໃກ້ມາດຕະຖານສາກົນເທື່ອລະກ້າວ.

#ຂ່າວ ແລະ ພາບໂດຍ: ກົມຄຸ້ມຄອງທະນາຄານທຸລະກິດ

## ເສດຖະກິດຈະເຂັ້ມແຂງ ຖ້າປວງຊົນຮ່ວມແຮງນໍາໃຊ້ເງິນກີບ